# ການສົ່ງເສີມລ້ຽງປາໃນນາເຂົ້າ

## ໃນແຂວງຊຽງຂວາງ

*ການລ້ຽງປາໃນນາເຂົ້າເປັນວິຖີຊີວິດດັ້ງເດີມຂອງປະຊາຊົນຊາວຊຽງຂວາງ, ເຊິ່ງສ້າງເປັນແຫຼ່ງອາຫານທີ່ຕິດພັນກັນລະຫວ່າງເຂົ້າ ແລະ ປາ. ນອກນັ້ນ, ຍັງເປັນການຄວບຄຸມພະຍາດແມງໄມ້ ແລະ ວັດຊະພືດໃນນາເຂົ້າ, ເຮັດໃຫ້ຜົນຜະລິດເຂົ້າໄດ້ຄຸນນະພາບສູງຂຶ້ນ ແລະ ຍັງສ້າງລາຍຮັບເພີ່ມຈາກການຂາຍປາ.*



## ນິເວດວິທະຍາ ແລະ ການຄຸ້ມຄອງ

- ຄັນນາສູງ 0.5-0.8 ແມັດ ເພື່ອຮັກສາລະດັບນໍ້າໃນນາເຂົ້າໃຫ້ໄດ້ 25-30 ຊັງຕີແມັດ.
- ພື້ນທີ່ນາເຂົ້າຕ້ອງອຸດົມສົມບູນຢູ່ໃນລະດັບ ພີເອັສ 6.5-7.5
- ສ້າງຂຸມປາຂະໜາດ ກວ້າງ 0.5-0.8 ແມັດ, ເລິກ 1 ແມັດ (ອາດຈະເປັນ 10% ຂອງເນື້ອທີ່ໄຮ່ນາ)
- ຂຸມປາຄວນສ້າງດ້ານຫຼຸບຂອງໄຮ່ນາ ເພື່ອສະດວກເມື່ອເວລາເກັບກູ້ປາ.
- ປາງໜ້ອຍຄວນປ່ອຍໃນປະລິມານ 200-300 ໂຕ/ໄລ່.



## ຜົນການຜະລິດ:

- ຊະນິດປາທີ່ລ້ຽງໃນນາເຂົ້າ ໂດຍທົ່ວໄປແລ້ວປະຊາຊົນຊາວຊຽງຂວາງ ແມ່ນລ້ຽງແຕ່ປາໄນ, ປານິນ ແລະ ນອກນັ້ນຍັງມີປາທໍາມະຊາດທີ່ຂຶ້ນມາຢູ່ເອງເຊັ່ນ: ປາດຸກນາ, ປາຄໍ້, ປາຂາວ, ປາກັ້ງ, ກຸ້ງ, ຫອຍ, ອຶ່ງ ແລະ ອື່ນໆ.
- ການລ້ຽງປາໃນນາເຂົ້າປະຊາຊົນລ້ຽງຢູ່ທຸກເມືອງ, ແຕ່ທາງວິຊາການຂະແໜງລ້ຽງສັດ ແລະ ການປະມົງໄດ້ລົງຊຸກຍູ້ທາງດ້ານເຕັກນິກຢູ່ໃນ 3 ເມືອງ ຄື: ເມືອງຜາໄຊ, ຄໍາ ແລະ ຄູນ.
- ໄດ້ສະໜັບສະໜູນປະຊາຊົນທີ່ລ້ຽງປາໃນຈໍານວນ 10 ບ້ານ, 69 ຄອບຄົວ,
- ສາມາດຕອບສະໜອງປາໃຫ້ແກ່ປະຊາຊົນຈໍານວນ 361 ຄອບຄົວໃນ 3 ເມືອງ.
- ໃນແຕ່ລະປີສາມາດຜະລິດໄດ້ຈໍານວນ 3,563 ກິໂລ, ໃນເນື້ອທີ່ນາ 27.6 ເຮັກຕາ.




## ການຕະຫຼາດ:

- ໃນແຕ່ລະປີສາມາດສ້າງລາຍຮັບສະເລ່ຍ 106,890,000 ກີບ.
- ຂາຍພາຍໃນຕະຫຼາດທ້ອງຖິ່ນ ແລະ ມີພໍ່ຄ້າ-ແມ່ຄ້າ ຄົນກາງມາເກັບຊື້ຢູ່ບ້ານ.
- ບໍລິໂພກພາຍໃນຄອບຄົວ ແລະ ຂາຍທົ່ວໄປຕາມຕະຫຼາດທ້ອງຖິ່ນແມ່ນ ລາຄາ 30,000 ກີບຕໍ່ກິໂລ.

## ໂອກາດ:

- ຍົກສະມັດຕະພາບການຜະລິດ ແລະ ຂະຫຍາຍອອກໄປສູ່ບ້ານ ແລະ ເມືອງອື່ນໆ.
- ຂະຫຍາຍເນື້ອທີ່ດິນນາປູກເຂົ້າທີ່ຕິດພັນກັບການລ້ຽງປາ.
- ຄວນມີການປັບປຸງຊະນິດພັນປາ ເພື່ອໃຫ້ເໝາະສົມກັບການລ້ຽງໃນນາເຂົ້າ.
- ກິດຈະກໍາຄວນຕິດພັນກັບໂຄງການກ່ຽວກັບໂພຊະນາການ






Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
NAFRI
TABI
The Agro-Biodiversity Initiative (TABI)